# ເອກະສານກຳກັບຢາ
# ALIDOUBLE

**ຊື່ທົ່ວໄປ**: Tadalafil & Dapoxetine
**ຊື່ການຄ້າ**: ALIDOUBLE
**ສ່ວນປະກອບ**:
Tadalafil ………………………………20mg
Dapoxetine ……………………………30mg

**ຂໍ້ບົ່ງໃຊ້:**
- ເປັນຢາປະສົມ ປະກອບມີ ສານອອກລິດ ສອງຊະນິດຄື Dapoxetine ແລະ Tadalafil, ນຳໃຊ້ເພື່ອບັນເທົາ ອາການດັ່ງລຸ່ມນີ້:
    - ຊ່ວຍບັນເທົາ ອາການຫຼັ່ງໄວ ໃນຜູ້ຊາຍ.
    - ຊ່ວຍບຳລຸງ ການເສື່ອມສະມັດຕະພາບທາງເພດ.
    - ຊ່ວຍຮັກສາ ຕ່ອມລູກໝາກໃຫຍ່ ໃນເພດຊາຍ.

**ການນຳໃຊ້**:
- ກິນ 1 ເມັດວັນລະຄັ້ງ ຫ້າມກິນສອງ ຫຼື ຫຼາຍຄັ້ງຕໍ່ວັນ.
- ຫ້າມຫຍ້ຳ ຫຼື ຄ້ຽວເມັດຢາ, ຄວນປະຕິບັດຕາມຄຳແນະນຳຂອງແພດ.
- ກິນ 1 ເມັດ ວັນລະຄັ້ງ ສຳລັບທ່ານຊາຍ ທີ່ມີການເສື່ອມສະມັດຕະພາບທາງເພດ, ແນະນຳໃຫ້ກິນຢາ 30 ນາທີກ່ອນຈະມີເພດສຳພັນ, ບໍ່ຄວນໃຊ້ຢາຕິດຕໍ່ກັນທຸກມື້ ເນື່ອງຈາກບໍ່ທັນໄດ້ມີການສຶກສາດ້ານຄວາມປອດໄພ ໃນການນຳໃຊ້ໃນໄລຍະຍາວນານ.

**ຂໍ້ຫ້າມ:**
- ຫ້າມໃຊ້ຢານີ້ໃນແມ່ຍິງ, ຢານີ້ ອາດເຮັດໃຫ້ມີອາການວິນວຽນຫົວ, ບໍ່ຄວນຂັບລົດໃນລະຫວ່າງໃຊ້ຢາ ອາດພາໃຫ້ເປັນອັນຕະລາຍໄດ້, ຫ້າມດື່ມເຫຼົ້າ ເພາະລິດຂອງເຫຼົ້າ ຈະພາໃຫ້ອາການວິນວຽນຫົວເພີ່ມຂຶ້ນ, ບໍ່ຄວນໃຊ້ຢານີ້ ກັບເດັກນ້ອຍ ເນື່ອງຈາກບໍ່ມີການສຶກສາປະສິດທິຜົນ ແລະ ຄວາມປອດໄພ, ຫ້າມໃຊ້ຢານີ້ໃນຄົນທີ່ມີອາການຊຶມເສົ້າ ທີ່ກຳລັງ ປິ່ນປົວ ດ້ວຍຢາທີ່ອອກລິດຕໍ່ MAO ຢ່າງໜ້ອຍ ຕ້ອງຢຸດໃຫ້ຢາກຸ່ມນີ້ ຜ່ານໄປ 14 ວັນ ຈຶ່ງແນະນຳໃຫ້ໃຊ້.
- ໃນລະຫວ່າງການໃຊ້ຢາຫຼີກເວັ້ນການດື່ມເຫຼົ້າທຸກປະເພດ ເພາະອາດເປັນຜົນເຮັດໃຫ້ສະມັດຕະພາບ ໃນການແຂງຕົວຂອງອົງຄະຊາດຫຼຸດລົງ ຫ້າມໃຊ້ຢາ ຮ່ວມກັບຢາພື້ນເມືອງ ກຸ່ມ St John's wort plant (ທີ່ໃຊ້ປິ່ນປົວ ອາການຊຶມເສົ້າ).
- ຢານີ້ອາດພາໃຫ້ເກີດມີອາການສັ່ນ ແລະ ເກີດບັນຫາຕາມມາຫຼັງການນຳໃຊ້ເຊັ່ນ: ການທຳງານຂອງຫົວໃຈ ແລະ ເສັ້ນເລືອດຫົວໃຈຜິດປົກກະຕິ, ມີບັນຫາຕໍ່ການທຳງານຂອງໝາກໄຂ່ຫຼັງ, ເກີດມີບັນຫາກ່ຽວກັບປອດ, ມີບັນຫາເພີ່ມໃນຜູ້ຕິດເຫຼົ້າ, ມີບັນຫາກ່ຽວກັບຕັບ, ມີອາການຊັກ, ມີບັນຫາການໄດ້ຍິນ, ມີບັນຫາໃນການເບິ່ງເຫັນ, ການແຂງຕົວຂອງອະໄວຍະວະເພດທີ່ແກ່ຍາວເຫຼົ່ານີ້ເປັນຕົ້ນ.

**ຄຳເຕືອນ:**
- ຫ້າມກິນຢານີ້ ເມື່ອພົບວ່າ ມີອາການແພ້ຕໍ່ຕົວຢາ ຫຼື ສ່ວນປະກອບຂອງຢານີ້ມາກ່ອນ.
- ເມື່ອຢູ່ໃນສະພາວະຂ້າງລຸ່ມ ບໍ່ຄວນນຳໃຊ້ຢານີ້ ເຊັ່ນ:
    - ເປັນໂລກຫົວໃຈ ກຳລັງປິ່ນປົວດ້ວຍຢາ ໃນໝວດ Nitrates
    - ມີຄວາມດັນເລືອດໃນປອດສູງ ກຳລັງໃຊ້ຢາໃນກຸ່ມ Riociguat ຫຼື ກຸ່ມ Alpha-blockers
    - ມີບັນຫາກ້າມເນື້ອຫົວໃຈຕາຍ, ຄວາມດັນສູງ, ຄວາມດັນຕ່ຳ
    - ມີບັນຫາກ່ຽວກັບໂລກຫົວໃຈ, ບັນຫາກ່ຽວກັບເລືອດ, ມີບັນຫາກ່ຽວກັບມະເຮັງ
    - ມີບັນຫາກ່ຽວກັບຕັບ, ໝາກໄຂ່ຫຼັງ
    - ຮູບຮ່າງຂອງອົງຄະຊາດຜິດປົກກະຕິ
    - ບໍ່ຄວນນຳໃຊ້ໃນຄົນທີ່ມີອາຍຸຕ່ຳກວ່າ 18 ປີ ຫຼື ສູງກວ່າ 65 ປີ, ຫຼີກເວັ້ນການດື່ມເຫຼົ້າທຸກປະເພດ ໃນເວລາໃຊ້ຢານີ້.
- ຄວນປຶກສາແພດເພື່ອໃຫ້ການແນະນຳສະເພາະເນື່ອງຈາກປະຕິກິລິຍາປະລະປັກຂອງຢາຂຶ້ນກັບສະພາບອາການ ແລະ ສຸຂະພາບຂອງແຕ່ລະບຸກຄົນ.

**ຜົນຂ້າງຄຽງ:**
- ຜົນຂ້າງຄຽງທີ່ມັກເກີດ ປະກອບມີ: ເຈັບຫົວ, ເລືອດດັງອອກ, ວິນວຽນ, ປັ່ນທ້ອງ, ອາຫານບໍ່ຍ່ອຍ, ໜ້າແດງ (ອອກຮ້ອນຕາມບໍລິເວນຫູ, ໃບໜ້າ, ຄໍ ແລະ ອື່ນໆ) ຮູ້ສຶກປາກແຫ້ງເຫຼົ່ານີ້ເປັນຕົ້ນ.

**ຮູບແບບຂອງຢາ:** ຢາເມັດສີສົ້ມ.
**ວັນໝົດອາຍຸ:** 24 ເດືອນ ນັບຫຼັງຈາກວັນທີ່ຜະລິດ.
**ຂະໜາດບັນຈຸ:** 2 ເມັດ / ກັບ.
**ການເກັບຮັກສາ:**
- ເກັບຮັກສາໄວ້ໃນສະຖານທີ່ເຢັນ ແລະ ແຫ້ງພາຍໃຕ້ອຸນຫະພູມ 30°C ເພື່ອປ້ອງກັນຈາກແສງແດດ.
- ເກັບໄວ້ຫ່າງໄກຈາກເດັກນ້ອຍ.

**ຜະລິດໂດຍ:**
ໂຮງງານຜະລິດຢາ ລາວພັນທະມິດ ຟາກມາ ກຣຸບ ຈຳກັດ
ສະຖານທີ່: ຕັ້ງຢູ່ເຂດ ພັດທະນາກວມລວມ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856-21-737 051
www.alliancepharmagroup.com

**ໝາຍເຫດ:** ຜະລິດຕະພັນດັ່ງກ່າວ ບໍ່ມີສັບພະຄຸນໃນການບົ່ງມະຕິ, ປິ່ນປົວ ຫຼື ປ້ອງກັນພະຍາດໄດ້

# ALIDOUBLE

**Generic Name:** Tadalafil & Dapoxetine
**Brand Name:** ALIDOUBLE
**Composition:**
Tadalafil ………………………………20mg
Dapoxetine ……………………………30mg
**Indications:**

- This product is a compound preparation composed of Dapoxetine and Tadalafil, suitable for the treatment of:
  - Premature ejaculation.
  - Erectile dysfunction.
  - Benign prostatic hyperplasia.

**Dosage:**

- Take once a day, take one tablet each time, not orally twice a day.
- Do not break or chew it, follow the doctor's advice
- Orally, for adult males,1 sky 1 time, every time 1 piece. before having sex, at least before sex 30 Minutes to take, not affected by eating. It is best not to take it continuously every day, and the safety of long-term use has not been established.

**Contraindication:**

- Tadalafil & Dapoxetine is not intended for use in women. Tadalafil & Dapoxetine may cause dizziness, so drive with caution. Avoid consuming alcohol as it might cause increased dizziness. Tadalafil & Dapoxetine should not be given to children as safety and effectiveness have not been established. Do not take Tadalafil & Dapoxetine if you have taken an MAO inhibitor (anti-depressant medication like Isocarboxazid, Phenelzine, Selegiline, and Tranylcypromine) in the last 14 days.
- Avoid consumption of alcohol as it may temporarily impair your ability to get an erection. Also, do not take St John's wort plant (a natural remedy to treat depression).
- Tadalafil & Dapoxetine may have interactions with cardiovascular/heart disease, renal dysfunction (kidney impairment), pulmonary disease, alcoholism, liver disease, seizure disorder, hearing loss, retinitis pigmentosa (loss of vision), and priapism (prolonged erection of the penis).

**Warning:**

- Do not take this medicine if you have a known allergy to the drug or any of its components.
- This medicine should not be used under the following conditions:
  - If you have heart disease and are being treated with medications in the nitrate group.
  - If you have pulmonary hypertension and are taking medications such as riociguat or drugs in the alpha-blocker group.
  - If you have a history of heart failure, high or low blood pressure.
  - If you have cardiovascular disorders, blood-related conditions, or cancer.
  - If you have liver or kidney problems.
  - If you have a structural deformity of the penis.
  - Not recommended for individuals under 18 or over 65 years of age.
  - Avoid alcohol consumption of any kind while taking this medication.
- Consult your doctor for individualized medical advice, as drug interactions and safety considerations vary depending on each person's health condition.

**Adverse effects:**

- Most common adverse reactions: Headache, nosebleed, dizziness, nausea, indigestion, flushing (warmth sensation in ears, face, neck, etc.), and dry mouth

**Dosage form:** Orange tablets
**Expiry date:** 24 months after the date of manufacture
**Packaging:** 2 Tablets / box
**Storage:**

- Store in a cool and dry place below 30$^{o}$C protect from light.
- Keep out of reach of children.

**Manufactured by:**
Laos Alliance Pharmaceutical Group Factory
Saysettha Development Zone, Vientiane Capital, Lao PDR
Tel: +856-21-737 051
www.alliancepharmagroup.com
**Note:** This product is not effective in diagnosing, treating or preventing diseases.